ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ 0002/ກປ
ນະຄອນຫຼວງວຽງຈັນ, ວັນທີ 02 JAN 2014

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງ ລະບົບຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ

- ອີງຕາມກົດໝາຍວ່າດ້ວຍກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມກົດໝາຍວ່າດ້ວຍມາດຕະຖານ ເລກທີ 13/ສພຊ, ລົງວັນທີ 26 ທັນວາ 2007;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມປູກຝັງ ເລກທີ 1452/ກປຝ, ລົງວັນທີ 02 ຕຸລາ 2013.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດຂອງ ສປປ ລາວ ແນໃສ່ຄຸ້ມຄອງ ແລະກວດກາຄຸນນະພາບຂອງການຜະລິດກະສິກຳ ໃຫ້ສອດຄ່ອງກັບມາດຕະຖານສາກົນ ຫຼື ISO/IEC 17065, ຮັບປະກັນຄວາມໂປ່ງໃສ ແລະຄວາມປອດໄພຂອງຜູ້ບໍລິໂພກ ທັງສອດຄ່ອງກັບລະບຽບກົດໝາຍ, ສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 2 ທີ່ຕັ້ງ ແລະພາລະບົດບາດ**

ຄະນະກຳມະການຄຸ້ມຄອງລະບົບຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ແລະ ຂຽນເປັນອັກສອນຫຍໍ້ວ່າ ***"ກຄຄ"*** ແມ່ນການ ຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍຕົວແທນທີ່ກ່ຽວຂ້ອງຂອງພາກລັດ ແລະເອກະຊົນ ໂດຍມີພະແນກມາດຕະຖານ ຂອງກົມປູກຝັງເປັນກອງເລຂາ, ມີພາລະບົດບາດໃນການຄົ້ນຄວ້າສ້າງນະໂຍບາຍ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດ

ກາຄຸນນະພາບ ແລະການຢັ້ງຢືນມາດຕະຖານກະສິ ກຳສະອາດ ເພື່ອນຳສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງຕາມລະບຽບການ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການມາດຕະຖານສາກົນ** (International Standard Organization - ISO) ໝາຍເຖິງ ອົງການທີ່ສ້າງມາດຕະຖານສາກົນ;
2. **ມາດຕະຖານສາກົນ** ໝາຍເຖິງ ມາດຕະຖານທີ່ຖືກຮັບຮອງ ໂດຍອົງການມາດຕະຖານ ສາກົນ ແລະສາມາດໃຫ້ສາທາລະນະຊົນເຂົ້າເຖິງໄດ້;
3. **ຜູ້ຈັດການຄຸນນະພາບ** (Quality Management Representative - QMR) ໝາຍເຖິງ ບຸກຄົນທີ່ເຮັດໜ້າທີ່ໃນການຈັດການດ້ານຄຸນນະພາບ;
4. **ຄະນະກຳມະການຮັກສາຄວາມໂປ່ງໃສ** (Impartial Committee) ໝາຍເຖິງ ຄະນະກຳ ມະການຮັກສາຄວາມໂປ່ງໃສຂອງໜ່ວຍງານຢັ້ງຢືນ;
5. **ຄະນະພິຈາລະນາອອກໃບຢັ້ງຢືນ** (Certification Committee) ໝາຍເຖິງ ຄະນະທີ່ເຮັດ ໜ້າທີ່ຄົ້ນຄວ້າ ແລະພິຈາລະນາ ອອກໃບຢັ້ງຢືນ;
6. **ຜູ້ກວດກາພາຍໃນ** (Internal Audit) ໝາຍເຖິງ ບຸກຄົນທີ່ເຮັດໜ້າທີ່ກວດກາການປະຕິ ບັດວຽກງານຂອງອົງກອນທັງໝົດ;
7. **ໜ່ວຍງານຢັ້ງຢືນ** (Laos Certification Body - LCB) ໝາຍເຖິງ ໜ່ວຍງານທີ່ເຮັດໜ້າ ທີ່ໃນການກວດກາພາກສະໜາມ ແລະເຮັດບົດລາຍງານໃຫ້ແກ່ຄະນະພິຈາລະນາ ອອກ ໃບຢັ້ງຢືນ ຊຶ່ງຂຶ້ນກັບພະແນກມາດຕະຖານ, ກົມປູກຝັງ;
8. **ຄະນະທົບທວນເອກະສານ** (Documentation Review Committee) ໝາຍເຖິງ ຄະນະ ກຳມະການ ທີ່ເຮັດໜ້າທີ່ໃນການທົບທວນເອກະສານ ແລະການຈັດຕັ້ງປະຕິບັດ ຂອງ ໜ່ວຍງານຢັ້ງຢືນ;
9. **ມາດຕະຖານສາກົນ ISO/IEC 17065** ໝາຍເຖິງ ມາດຕະຖານສາກົນ ສຳລັບເປັນຄູ່ມື ໃນການກຳນົດເງື່ອນໄຂຄວາມສອດຄ່ອງຂອງໜ່ວຍງານອອກໃບຢັ້ງຢືນທີ່ໃຫ້ການຢັ້ງຢືນ ສຳລັບຜະລິດຕະພັນ, ຂະບວນການ ແລະການບໍລິການ;
10. **ມາດຕະຖານການຜະລິດກະສິກຳສະອາດ** ໝາຍເຖິງ ຂະບວນການຜະລິດກະສິກຳທີ່ຖືກ ຕ້ອງຕາມມາດຕະຖານການຜະລິດກະສິກຳອິນຊີ ຫຼືກະສິກຳສະອາດ.

## ໝວດທີ 2
## ໜ້າທີ່ ແລະຂອບເຂດສິດ

**ມາດຕາ 4 ໜ້າທີ່**

1. ຄົ້ນຄວ້າ ສ້າງ ແລະນຳສະເໜີ ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການແລະ ນິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານ ການຜະລິດກະສິກຳສະອາດຂອງ ສປປ ລາວ ເພື່ອໃຫ້ແທດເໝາະກັບລະບຽບການພາຍ ໃນ, ສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
2. ຄົ້ນຄ້ວາ ກຳນົດຜະລິດຕະພັນ ແລະປະເພດສິນຄ້າກະສິກຳສະອາດ ທີ່ເປັນບູລິມະສິດ ເພື່ອສະເໜີກະຊວງກະສິກຳ ແລະ ປ່າໄມ້ ຮັບຮູ້ຢ່າງເປັນທາງການ;

3. ຄຸ້ມຄອງລະບົບຄຸນນະພາບ ແລະລະບົບຢັ້ງຢືນມາດຕະຖານ ການຜະລິດກະສິກຳສະອາດ ພ້ອມທັງອຳນວຍຄວາມສະດວກ ໃນການບໍລິຫານຈັດການໜ່ວຍງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
4. ຄົ້ນຄວ້າຮູບແບບ ແລະວິທີການໂຄສະນາ, ຮຽບຮຽງ ແລະສ້າງເປັນປື້ມຄູ່ມື, ແຜ່ນພັບ, ປົດສະເຕີ... ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍ ແນໃສ່ເຮັດໃຫ້ປະຊາຊົນ ແລະຜູ້ປະກອບການ ມີຄວາມເຂົ້າໃຈງ່າຍ ແລະສາມາດເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານກວດກາຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ຢ່າງມີປະສິດທິຜົນ;
5. ຕິດຕາມ, ກວດກາ, ປະເມີນຜົນ ແລະສະຫຼຸບລາຍງານວຽກງານຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ໃຫ້ແກ່ຂັ້ນເທິງຊາບເປັນປົກກະຕິ;
6. ສ້າງ ແລະປັບປຸງລະບົບກົນໄກປະສານງານລະຫວ່າງຂະແໜງການຂັ້ນສູນກາງ ແລະທ້ອງຖິ່ນ ເພື່ອໃຫ້ວຽກຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ;
7. ພົວພັນຮ່ວມມື ແລະຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການກ່ຽວກັບວຽກງານຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ບົນພື້ນຖານລະບຽບກົດໝາຍ ແລະການຕົກລົງເຫັນດີຈາກກະຊວງກະສິກຳ ແລະປ່າໄມ້;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການພິຈາລະນາໂຈະໃບຢັ້ງຢືນມາດຕະຖານຄຸນນະພາບການຜະລິດກະສິກຳສະອາດ;
9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະມອບໝາຍຂອງກະຊວງກະສິກຳ ແລະປ່າໄມ້.

**ມາດຕາ 5 ຂອບເຂດສິດ**

1. ຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະຖອດຖອນບົດຮຽນຕາມການຕົກລົງເຫັນດີຈາກ ກະຊວງກະສິກຳ ແລະປ່າໄມ້ຕາມລະບຽບການ;
2. ມອບໝາຍ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ໃຫ້ກອງເລຂາ ເພື່ອຈັດຕັ້ງປະຕິບັດຕາມແຜນການທີ່ວາງໄວ້;
3. ພິຈາລະນາແຕ່ງຕັ້ງ ຜູ້ຈັດການຄຸນນະພາບ, ຜູ້ກວດກາພາຍໃນ, ຄະນະທົບທວນເອກະສານ ແລະຄະນະພິຈາລະນາອອກໃບຢັ້ງຢືນ ຕາມການຕົກລົງຂອງກອງປະຊຸມ;
4. ພິຈາລະນາ ອະນຸມັດ ແລະຮັບຮອງ ລະບົບເອກະສານທີ່ກ່ຽວຂ້ອງກັບການກວດກາ ແລະການຢັ້ງຢືນ ຕາມການສະເໜີຂອງອະນຸກຳມະການບໍລິຫານ ແລະເຕັກນິກ;
5. ປະຕິບັດສິດອື່ນໆ ຕາມການຕົກລົງ ແລະເຫັນດີຂອງກະຊວງກະສິກຳ ແລະປ່າໄມ້.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 6 ໂຄງປະກອບດ້ານກົງຈັກ**

**"ກຄຄ"** ປະກອບມີ 2 ອະນຸກຳມະການຊ່ວຍວຽກ ດັ່ງນີ້:

1. ອະນຸກຳມະການບໍລິຫານ;

2. ອະນຸກຳມະການເຕັກນິກ.

ອະນຸກຳມະການບໍລິຫານ ຮັບຜິດຊອບວຽກງານບໍລິຫານຈັດການທັງໝົດ ຂອງ ກຄຄ, ສ່ວນອະນຸກຳມະການເຕັກນິກ ແມ່ນຮັບຜິດຊອບວຽກງານຄົ້ນຄວ້າມາດຕະຖານ, ການກວດກາ ແລະການຢັ້ງຢືນຄຸນນະພາບການຜະລິດກະສິກຳສະອາດ.

**ມາດຕາ 7 ໂຄງປະກອບດ້ານບຸກຄະລາກອນ**

***"ກຄຄ"*** ປະກອບດ້ວຍປະທານ, ຮອງປະທານ ແລະຄະນະກຳມະການ ຈຳນວນ 9 ທ່ານ ຊຶ່ງເປັນຕົວແທນທີ່ກ່ຽວຂ້ອງ ຈາກພາກລັດ ແລະເອກະຊົນ ດັ່ງນີ້:

1. ທ່ານ ຫົວໜ້າກົມປູກຝັງ, ກະຊວງກະສິກຳ ແລະປ່າໄມ້ — ເປັນປະທານ;
2. ທ່ານ ຫົວໜ້າກົມສົ່ງເສີມກະສິກຳ ແລະສະຫະກອນ, ກະຊວງ ກປ — ຮອງປະທານ;
3. ທ່ານ ຮອງຫົວໜ້າກົມສົ່ງເສີມ ແລະພັດທະນາສິນຄ້າ, ກະຊວງ ອຄ — ຄະນະ;
4. ທ່ານ ຮອງຫົວໜ້າກົມອາຫານ ແລະຢາ, ກະຊວງສາທາລະນະສຸກ — ຄະນະ;
5. ທ່ານ ຮອງຫົວໜ້າກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະເຕັກໂນໂລຊີ — ຄະນະ;
6. ຄະນະບໍດີ ຄະນະກະເສດສາດ, ມະຫາວິທະຍາໄລແຫ່ງຊາດ — ຄະນະ;
7. ທ່ານ ເລຂາທິການສະພາການຄ້າ ແລະອຸດສາຫະກຳແຫ່ງຊາດ — ຄະນະ;
8. ຕາງໜ້າກຸ່ມຜູ້ບໍລິໂພກ — ຄະນະ;
9. ຕາງໜ້າກຸ່ມຜະລິດກະສິກຳອິນຊີ — ຄະນະ;
10. ຕາງໜ້າອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ — ຄະນະ.

**ອະນຸກຳມະການບໍລິຫານ** ປະກອບດ້ວຍຜູ້ຕາງໜ້າບັນດາພະແນກ, ສູນ ແລະຂະແໜງທີ່ກ່ຽວຂ້ອງ ຂອງກົມປູກຝັງ ຈຳນວນ 11 ທ່ານ ດັ່ງນີ້:

1. ທ່ານ ຮອງຫົວໜ້າກົມປູກຝັງ, ຜູ້ຊີ້ນຳພະແນກມາດຕະຖານ — ເປັນຫົວໜ້າ;
2. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກມາດຕະຖານ, ຜູ້ຊີ້ນຳຂະແໜງຮັບຮອງ ແລະຢັ້ງຢືນ — ຮອງ;
3. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກລະບຽບການ, ກົມປູກຝັງ — ຄະນະ;
4. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກຄຸ້ມຄອງ, ກົມປູກຝັງ — ຄະນະ;
5. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກກັກກັນພືດ, ກົມປູກຝັງ — ຄະນະ;
6. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກແຜນການ, ກົມປູກຝັງ — ຄະນະ;
7. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກບໍລິຫານ, ກົມປູກຝັງ — ຄະນະ;
8. ທ່ານ ຫົວໜ້າ ຫຼືຮອງຫົວໜ້າສູນພັດທະນາກະສິກຳສະອາດ, ກົມປູກຝັງ — ຄະນະ;
9. ທ່ານ ຫົວໜ້າ ຫຼືຮອງຫົວໜ້າສູນປ້ອງກັນພືດ, ກົມປູກຝັງ — ຄະນະ;
10. ທ່ານ ຫົວໜ້າຂະແໜງຮັບຮອງ ແລະຢັ້ງຢືນ, ພະແນກມາດຕະຖານ — ຄະນະ;
11. ທ່ານ ຫົວໜ້າຂະແໜງພັດທະນາມາດຕະຖານ, ພະແນກມາດຕະຖານ — ຄະນະ.

**ອະນຸກຳມະການເຕັກນິກ** ປະກອບດ້ວຍຜູ້ຕາງໜ້າບັນດາພະແນກ ແລະສູນທີ່ກ່ຽວຂ້ອງ ຂອງກົມປູກຝັງ ຈຳນວນ 7 ທ່ານ ດັ່ງນີ້:

1. ທ່ານ ຮອງຫົວໜ້າກົມປູກຝັງ, ຜູ້ຊີ້ນຳພະແນກມາດຕະຖານ — ເປັນຫົວໜ້າ;
2. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກມາດຕະຖານ, ຜູ້ຊີ້ນຳຂະແໜງຮັບຮອງ ແລະຢັ້ງຢືນ — ຮອງ;

3. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກລະບຽບການ, ກົມປູກຝັງ ຄະນະ;
4. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກຄຸ້ມຄອງ, ກົມປູກຝັງ ຄະນະ;
5. ທ່ານ ຫົວໜ້າ ຫຼືຮອງຫົວໜ້າພະແນກກັກກັນພືດ, ກົມປູກຝັງ ຄະນະ;
6. ທ່ານ ຫົວໜ້າ ຫຼືຮອງຫົວໜ້າສູນພັດທະນາກະສິກຳສະອາດ, ກົມປູກຝັງ ຄະນະ;
7. ທ່ານ ຫົວໜ້າ ຫຼືຮອງຫົວໜ້າສູນປ້ອງກັນພືດ, ກົມປູກຝັງ ຄະນະ.

## ໝວດທີ 4
## ຫຼັກການ ແລະແບບແຜນວິທີການເຮັດວຽກ

**ມາດຕາ 8 ຫຼັກການການເຮັດວຽກ**

1. ການເຄື່ອນໄຫວຂອງ "ກຄຄ" ແມ່ນບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
2. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບແໜ້ນກັບລະບົບແບ່ງຂັ້ນຄຸ້ມຄອງ, ແບ່ງວຽກໃຫ້ອະນຸກຳມະການກ່ຽວຂ້ອງ ພ້ອມທັງສິດໃນການຕັດສິນບັນຫາຢ່າງຈະແຈ້ງ;
3. ພົວພັນ, ປະສານງານ ແລະຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ທີ່ເຮັດວຽກກ່ຽວກັບການຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານກະສິກຳສະອາດ ບົນພື້ນຖານການເຫັນດີຂອງກະຊວງກະສິກຳ ແລະປ່າໄມ້ ແລະລະບຽບກົດໝາຍກຳນົດ.

**ມາດຕາ 9 ແບບແຜນວິທີເຮັດວຽກ**

1. ເຮັດວຽກ ຢ່າງມີແຜນການ, ແຜນງານ ແລະໂຄງການລະອຽດ ພ້ອມທັງມີຈຸດສຸມ ແລະເປົ້າໝາຍໃນແຕ່ລະໄລຍະ;
2. ການພິຈາລະນາ ແລະ ຕົກລົງບັນຫາຕ່າງໆຂອງ "ກຄຄ" ແລະອະນຸກຳມະການ ແມ່ນຜ່ານກອງປະຊຸມ ຕາມການສະເໜີ ຂອງກອງເລຂາ ຕໍ່ກັບການຫັນເອົາແນວທາງນະໂຍບາຍຂອງຂັ້ນເທິງ, ສັນຍາ ແລະສົນທິສັນຍາສາກົນທີ່ກ່ຽວຂ້ອງຊຶ່ງ ສປປ ລາວ ເປັນພາຄີ ເຂົ້າໃນໜ້າວຽກຂອງຕົນ;
3. ບັນດາເອກະສານກ່ຽວກັບຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະນິຕິກຳຕ່າງໆທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມໃຫຍ່ສະໄໝສາມັນຂອງ "ກຄຄ" ຕ້ອງຜ່ານການຄົ້ນຄວ້າ ແລະປະກອບຄຳເຫັນຈາກບັນດາອະນຸກຳມະການທີ່ກ່ຽວຂ້ອງເສຍກ່ອນ ແລະເມື່ອກອງປະຊຸມຕົກລົງຮັບຮອງເອົາແລ້ວ ຕ້ອງນຳສະເໜີຂັ້ນເທິງ ພິຈາລະນາປະກາດໃຊ້.

**ມາດຕາ 10 ກອງປະຊຸມ**

ກອງປະຊຸມ "ກຄຄ" ເປີດຂຶ້ນ ສອງຄັ້ງຕໍ່ປີ, ໃນກໍລະນີຈຳເປັນ ຫຼືຮີບດ່ວນ ກໍສາມາດຈັດກອງປະຊຸມໄດ້ ຕາມການຮຽກເຊີນຂອງປະທານ "ກຄຄ", ການປະຊຸມແຕ່ລະຄັ້ງ ຕ້ອງມີຄະນະເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນທັງໝົດ ພ້ອມທັງເຮັດບົດບັນທຶກກອງປະຊຸມ ໂດຍແມ່ນປະທານກອງປະຊຸມເປັນຜູ້ລົງລາຍເຊັນ, ມະຕິກອງປະຊຸມ ຈະມີຜົນສັກສິດບັງຄັບໃຊ້ໄດ້ ຕ້ອງມີຜູ້ເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນຜູ້ເຂົ້າຮ່ວມປະຊຸມ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ ແລະຕາປະທັບ**

ງົບປະມານເຄື່ອນໄຫວ ຂອງຄະນະ "ກຄຄ" ແມ່ນນຳໃຊ້ງົບປະມານ ຂອງກົມປູກຝັງ ແລະ ການສະໜັບສະໜູນຂອງພາກສ່ວນທີ່ກ່ຽວຂ້ອງ ຈາກພາຍໃນ ຫລືຕ່າງປະເທດ. ສະເພາະເອກະສານຕ່າງໆ ທີ່ຜ່ານການເຫັນດີຂອງ "ກຄຄ" ແມ່ນໃຫ້ນຳໃຊ້ຕາປະທັບ ຂອງກົມປູກຝັງເພື່ອຢັ້ງຢືນເປັນທາງການ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະກຳມະການຄຸ້ມຄອງລະບົບຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ຈັດຕັ້ງ ແລະຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ໃຫ້ເປັນລະບຽບການພາຍໃນຂອງຕົນ ລວມທັງການແບ່ງໜ້າທີ່ ແລະຄວາມຮັບຜິດຊອບໃຫ້ບັນດາອະນຸກຳມະການຢ່າງລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ, ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ການຈັດຕັ້ງ ແລະຜູ້ປະກອບການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ວິໄລວັນ ພົມເຂ